ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2044 /ອຄ.

ນະຄອນຫລວງວຽງຈັນ, ວັນທີ 13 ຕຸລາ 2010.

# ຄຳສັ່ງແນະນຳ

## ກ່ຽວກັບການຊຸກຍູ້ສົ່ງເສີມ, ການຄຸ້ມຄອງ ແລະ ກວດກາ ກິດຈະການໂຮງງານຜະລິດຢາສູບ

---

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/99/ສພຊ, ລົງວັນທີ 3/4/99.
- ອີງຕາມດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 67/ນຍ, ລົງວັນທີ 12/4/06.
- ອີງຕາມດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 301/ນຍ, ລົງວັນທີ 12/10/05.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 188/ນຍ, ລົງວັນທີ 17/8/06.
- ອີງຕາມແຈ້ງການຂອງຄະນະເລຂາທິການລັດຖະບານ ເລກທີ 2318/ຄລບ, ລົງວັນທີ 15/7/2010.

ເພື່ອແນໃສ່ ຊຸກຍູ້ ສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກ ໃຫ້ແກ່ໂຮງງານຜະລິດຢາສູບ ໄດ້ເຄື່ອນໄຫວກິດຈະການ ການປູກ, ການປຸງແຕ່ງ ຜະລິດຕະພັນຢາສູບ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງສັງຄົມ, ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕາມທິດທາງນະໂຍບາຍຂອງລັດຖະບານ ກໍ່ຄືແຜນຍຸດທະສາດການພັດທະນາອຸດສາຫະກຳ ແລະ ການຄ້າ.

ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ບັນດາໂຮງງານຜະລິດຢາສູບ ໃຫ້ດຳເນີນກິດຈະການຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ເງື່ອນໄຂຂອງການຜະລິດ ເຊັ່ນ: ດ້ານທີ່ຕັ້ງໂຮງງານ, ອາຄານຜະລິດ, ເຄື່ອງຈັກ ແລະ ຂະບວນການຜະລິດ, ຄວາມປອດໄພ, ສຸຂະອະນາໄມ ແລະ ສິ່ງແວດລ້ອມໂຮງງານ. ແນໃສ່, ຮັບປະກັນການເຄື່ອນໄຫວຂອງໂຮງງານ ໃຫ້ຖືກຕ້ອງຕາມລະບຽບກົດໝາຍກ່ຽວກັບອຸດສາຫະກຳປຸງແຕ່ງ ແລະ ສອດຄ່ອງກັບລະບຽບກົດໝາຍ ທີ່ກ່ຽວຂ້ອງ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງແນະນຳ ຄືດັ່ງນີ້:

### I. ການສົ່ງເສີມການຜະລິດຢາສູບ

#### ກ. ແຜນການຜະລິດຢາສູບ ແລະ ການນຳໃຊ້ວັດຖຸດິບ

1). ບໍລິສັດຕ້ອງສ້າງແຜນການລະອຽດ ໃນການປູກຢາສູບແຕ່ລະປີ ເຊັ່ນ: ຈຳນວນເນື້ອທີ່ການປູກ, ຄອບຄົວທີ່ເຂົ້າຮ່ວມ, ແນວພັນທີ່ນຳໃຊ້, ຈຳນວນເຕົາບົ່ມໃບຢາ, ແຜນການເກັບຊື້, ແຜນການຈຳໜ່າຍພາຍໃນ ແລະ ສົ່ງ

ລຄກຕ່າງໆ ປະເທດ ແລະ ຈຳນວນພະນັກງານວິຊາການ ທັງນີ້ກໍ່ເພື່ອໃຫ້ຂະແໜງການທີ່ກ່ຽວຂ້ອງ ສາມາດລົງຊຸກຍູ້, ຕິດຕາມ, ກວດກາ ຄວາມເປັນໄປໄດ້ຂອງໂຄງການ ໃນຂັ້ນຕໍ່ໄປ.

2). ບໍລິສັດຕ້ອງສ້າງແຜນຄວາມຕ້ອງການວັດຖຸດິບ ທີ່ນຳໃຊ້ໃນແຕ່ລະປີໃຫ້ລະອຽດຈະແຈ້ງ. ໃນນີ້, ລວມທັງແຜນການນຳໃຊ້ວັດຖຸດິບທີ່ຜະລິດຢູ່ພາຍໃນ ແລະ ແຜນການວັດຖຸດິບທີ່ນຳເຂົ້າຈາກຕ່າງປະເທດ.

ຂ. ນະໂຍບາຍ ແລະ ກົນໄກການປູກໃບຢາ

1). ໃຫ້ຈັດຕັ້ງກຸ່ມຜູ້ຜະລິດໃບຢາສູບ ຢູ່ທຸກໆເຂດທີ່ບໍລິສັດສົ່ງເສີມປູກຢາສູບ ເພື່ອປະສານງານ, ຖອດຖອນບົດຮຽນ ແລະ ຮ່ວມມືການພັດທະນາທາງດ້ານເຕັກນິກການຜະລິດ ແລະ ການຕະຫລາດ, ພ້ອມກັນນັ້ນໃນທຸກໆກຸ່ມຜູ້ຜະລິດນັ້ນ ຕ້ອງມີວິຊາການປະຈຳຢູ່ ເພື່ອໃຫ້ການແນະນຳທາງເຕັກນິກວິຊາການ.

2). ໃຫ້ບໍລິສັດ ພິຈາລະນາສະໜອງສິນເຊື່ອໃຫ້ແກ່ຊາວກະສິກອນຜູ້ຜະລິດ ດ້ວຍຮູບແບບຜູກພັນສອງສົ້ນ 2+3 ຄື: ປະຊາຊົນເປັນທີ່ດິນ ແລະ ແຮງງານ; ບໍລິສັດເປັນຜູ້ສະໜອງ: (1) ທຶນ (ແນວພັນ, ຝຸ່ນ, ຢາປາບສັດຕູພືດ), (2) ເຕັກນິກວິຊາການ, (3) ການຕະຫລາດ; ຫລື 2+5, ນອກຈາກ 3 ປັດໄຈດັ່ງກ່າວແລ້ວ ບໍລິສັດຍັງຕ້ອງເພີ່ມຕື່ມຄື: (4) ຄ່າຂົນສົ່ງ, (5) ຄ່າບໍລິການ ໃຫ້ແກ່ກຸ່ມຊາວສວນ.

3). ບໍລິສັດຕ້ອງຮັບປະກັນ ດ້ານລາຄາການເກັບຊື້ໃບຢາສູບ ກັບປະຊາຊົນ ຫລື ກຸ່ມຜູ້ຜະລິດຢາສູບ ດ້ວຍລາຄາສົມເຫດສົມຜົນ ໂດຍໃຫ້ພາກລັດເຂົ້າມີສ່ວນຮ່ວມເປັນຄົນກາງ ຮັບຮູ້ລາຍລະອຽດກ່ຽວກັບສັນຍາ ແລະ ນະໂຍບາຍຕ່າງໆທີ່ມີຕໍ່ກັນ, ການຮັບປະກັນລາຄາຕ້ອງແມ່ນລາຄາຕ່ຳສຸດ, ກໍລະນີລາຄາຕະຫລາດເໜັງຕີງ ຕ້ອງໄດ້ກຳນົດຄືນໃໝ່.

4). ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນເປັນປະຈຳ, ໂດຍສະເພາະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ, ຂະແໜງປູກຝັງ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ເພື່ອລົງຊຸກຍູ້ສົ່ງເສີມ, ຕິດຕາມ, ກວດກາ ການເຄື່ອນໄຫວທຸລະກິດຂອງບໍລິສັດ.

5). ໃຫ້ບໍລິສັດ ພັດທະນາຕາໜ່າງທຸລະກິດ ເຊັ່ນ: ເກັບຊື້ໃຫ້ທັນເວລາ ແລະ ເກັບຮັກສາໃຫ້ຖືກເຕັກນິກ, ພັດທະນາລະບົບສາງເກັບຮັກສາ ແລະ ເຕົາອົບໃບຢາສູບ ໃຫ້ພຽງພໍກັບຄວາມຕ້ອງການ. ພ້ອມດຽວກັນນັ້ນ, ບໍລິສັດຄວນເປັນເຈົ້າການ ໃນການສະໜອງທຶນກໍ່ສ້າງເຕົາອົບໃບຢາສູບ ຕື່ມອີກ.

6). ບໍລິສັດຕ້ອງມີວິຊາການ ລົງໄປແນະນຳທາງດ້ານເຕັກນິກວິຊາການໃຫ້ແກ່ຊາວສວນ ໃນໄລຍະເກັບກ່ຽວໃບຢາສູບ ແລະ ເອົາໃບຢາສູບເຂົ້າເຕົາອົບ. ທັງນີ້, ເພື່ອເປັນການຮັບປະກັນຜົນເສັຍຈາກໃບຢາທີ່ບໍ່ໄດ້ມາດຕະຖານ ເຊັ່ນ: ໃບຢາເປື່ອຍ ແລະ ໃບຢາບໍ່ເປັນສີເຫລືອງ.

7). ບໍລິສັດທີ່ຈະເກັບຊື້ໃບຢາສູບຈາກຊາວສວນ ນັ້ນ ຄວນຈັດຊັ້ນຄຸນນະພາບ (ເກຣດ) ໃບຢາສູບ ໃນພື້ນທີ່ຂອງປະຊາຊົນ ແລ້ວຈຶ່ງຂົນສົ່ງເຂົ້າໂຮງງານ.

ຄ. ການນຳເຂົ້າແນວພັນຢາສູບ, ຝຸ່ນ, ຢາປາບສັດຕູພືດ, ໃບຢາອົບແຫ້ງ ແລະ ຢາເສັ້ນ

1). ການນຳເຂົ້າແນວພັນຢາສູບ ບໍລິສັດຕ້ອງປະຕິບັດຕາມ ມາດຕາ 19, ໝວດທີ 4 ຂອງລະບຽບການຄຸ້ມຄອງນຳໃຊ້ແນວພັນ ແລະ ເມັດພັນພືດສຳລັບການປູກຝັງຢູ່ ສປປ ລາວ ສະບັບເລກທີ 719/ກປ, ລົງວັນທີ 3/12/1997.

2). ການນຳເຂົ້າຝຸ່ນ ບໍລິສັດຕ້ອງປະຕິບັດຕາມມາດຕາ 31, ໝວດທີ 5 ຂອງລະບຽບການວ່າດ້ວຍການຄຸ້ມຄອງນຳໃຊ້ຝຸ່ນສຳລັບການປູກຝັງ ສະບັບເລກທີ 1503/ກປ, ລົງວັນທີ 29/11/2000.

3). ການນຳເຂົ້າຢາປາບສັດຕູພືດ ແລະ ຢາອື່ນໆ ບໍລິສັດຕ້ອງປະຕິບັດຕາມມາດຕາ 18 ໝວດທີ 4 ຂອງຂໍ້ຕົກລົງ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ໃນ ສປປ ລາວ ສະບັບເລກທີ 2860/ກປ, ລົງວັນທີ 11/6/10.

4). ການນຳເຂົ້າໃບຢາສູບອົບແຫ້ງ, ຢາເສັ້ນອື່ນໆນັ້ນ ບໍລິສັດຕ້ອງປະຕິບັດຕາມມາດຕາ 14, 15, 16, 17 ແລະ 18 ໝວດທີ 2 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ ແລະ ແຈ້ງການຂອງກະຊວງກະສິກຳແລະ ປ່າໄມ້ ສະບັບເລກທີ 1429/ກປ, ລົງວັນທີ 18/11/09.

## II. ເງື່ອນໄຂຂອງການດຳເນີນກິດຈະການໂຮງງານ

### ກ. ການຂໍອະນຸຍາດດຳເນີນກິດຈະການໂຮງງານ

ໂຮງງານຜະລິດຢາສູບ ທຸກຂະໜາດ ຕ້ອງຂຶ້ນທະບຽນວິສາຫະກິດ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ, ຂຶ້ນທະບຽນອາກອນ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ຕ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານ ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ສະບັບເລກທີ 1301/ອຄ, ລົງວັນທີ 30/7/07 ແລະ ປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

### ຂ. ມາດຕະຖານໂຮງງານ

1). ທີ່ຕັ້ງໂຮງງານ

ໂຮງງານຜະລິດຢາສູບ ທຸກຂະໜາດ ຕ້ອງຕັ້ງຢູ່ສະຖານທີ່ກວ້າງຂວາງ, ບໍລິເວນໂຮງງານຕ້ອງມີເນື້ອທີ່ພຽງພໍ ແລະ ເໝາະສົມກັບກິດຈະການ, ເສັ້ນທາງເຂົ້າ-ອອກຕ້ອງກວ້າງຂວາງ ບໍ່ກີດຂວາງການສັນຈອນ, ບໍ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂຮງງານຕ້ອງຕັ້ງຢູ່ຫ່າງໄກຈາກເຂດຊຸມຊົນແອອັດ, ຫ່າງໄກຈາກສະຖານທີ່ຫວງຫ້າມທາງການ ເຊັ່ນ: ໂຮງຮຽນ, ໂຮງໝໍ, ວັດວາອາຮາມ... ຢ່າງນ້ອຍ 1.000 ແມັດ ແລະ ປະຕິບັດຖືກຕ້ອງຕາມລະບຽບການປຸກສ້າງທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

ພາຍໃນໂຮງງານຕ້ອງປະກອບມີ: ຫ້ອງການບໍລິຫານ, ສາງວັດຖຸດິບ, ອາຄານຜະລິດ, ຜະລິດຕະພັນ ແລະ ຈັດໃຫ້ມີສິ່ງອຳນວຍຄວາມສະດວກ ໃຫ້ແກ່ຄົນງານ ເຊັ່ນ: ບ່ອນຈອດລົດ, ບ່ອນພັກຜ່ອນຄົນງານ, ຫ້ອງນ້ຳ ແລະ ອື່ນໆ ທີ່ຈຳເປັນ ແລະ ຕ້ອງມີລະບົບໄຟຟ້າ ທີ່ຮັບປະກັນຄວາມປອດໄພ ແລະ ມີລະບົບນ້ຳໃຊ້ ຢ່າງພຽງພໍ.

2). ອາຄານໂຮງງານ

ອາຄານຜະລິດຢາສູບ ຕ້ອງກວ້າງຂວາງ ເໝາະສົມກັບຂະບວນການຜະລິດ ຫລື ປຸງແຕ່ງ, ໂຄງສ້າງຕ້ອງແໜ້ນໜາແຂງແຮງ, ເສົາເຮັດດ້ວຍເບຕົງ ຫລື ເສົາເຫລັກ, ພື້ນເຮັດດ້ວຍເບຕົງ, ມຸງດ້ວຍກະເບື້ອງ ຫລື ສັງກະສີ; ຄວາມສູງແຕ່ພື້ນຫາເພດານ 4,50 ແມັດຂຶ້ນໄປ, ໂດຍໄດ້ຮັບອະນຸຍາດ ແລະ ກໍ່ສ້າງຖືກຕ້ອງຕາມລະບຽບການກ່ຽວກັບການຄຸ້ມຄອງການປຸກສ້າງ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

3). ເຄື່ອງຈັກ ແລະ ຂະບວນການຜະລິດ

ໂຮງງານຜະລິດຢາສູບ ຕ້ອງຕິດຕັ້ງເຄື່ອງຈັກ, ເຄື່ອງມືອຸປະກອນທີ່ຈຳເປັນຕົ້ນຕໍ ຕາມຂະບວນການຜະລິດ ເຊັ່ນ: ການອົບ, ການໝັ້ງ, ການຊອຍ, ການຂົ້ວ, ການຜະລິດກອກຢາ (ມວນກອກຢາ) ແລະ ຂັ້ນຕອນການຫຸ້ມຫໍ່. ບັນດາເຄື່ອງຈັກທີ່ນຳໃຊ້ຢູ່ໃນໂຮງງານ ຕ້ອງເປັນເຄື່ອງຈັກໃໝ່ 100% ແລະ ຕ້ອງຕິດຕັ້ງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ເປັນລະບົບຕໍ່ອງໂສ້ການຜະລິດທີ່ບໍ່ສັບສົນ ແລະ ມີຄວາມປອດໄພໃນເວລານຳໃຊ້.

4). ວິຊາການເຕັກນິກ ແລະ ຄົນງານ

ໂຮງງານຜະລິດຢາສູບ ຕ້ອງປະກອບມີບຸກຄະລາກອນທີ່ມີຄຸນນະວຸດທິ ແລະ ສອດຄ່ອງກັບແຕ່ລະຕໍາແໜ່ງງານ, ຕ້ອງມີວິຊາການວິຊາສະເພາະທີ່ມີໃບປະກາສະນິຍະບັດ ຫລື ໃບຢັ້ງຢືນຮັບຮອງດ້ານເຕັກນິກວິຊາການທີ່ຖືກຕ້ອງປະຈໍາຢູ່ໂຮງງານ. ໃນນີ້, ວິຊາການເຕັກນິກ ແລະ ຄົນງານ ຕ້ອງໄດ້ຜ່ານການຝຶກອົບຮົມ ແລະ ຍົກລະດັບທາງດ້ານວິຊາການ ຢ່າງເປັນປະຈໍາ.

ໃນກໍລະນີ ມີພະນັກງານວິຊາການ ຫລື ຄົນງານຕ່າງປະເທດ ເຂົ້າມາເຮັດວຽກປະຈໍາຢູ່ໃນໂຮງງານ ຕ້ອງໄດ້ຂໍອະນຸຍາດຕາມກົດໝາຍວ່າດ້ວຍແຮງງານ ແລະ ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

5). ຄວາມປອດໄພ, ສຸຂະອະນາໄມຂອງໂຮງງານ

(1) ໂຮງງານຜະລິດຢາສູບ ຕ້ອງມີໜ່ວຍງານບໍລິຫານຄວາມປອດໄພປະຈໍາໂຮງງານ ເພື່ອແນະນໍາດ້ານຄວາມປອດໄພໃຫ້ແກ່ຄົນງານຜູ້ທີ່ເຮັດວຽກໃນສະຖານທີ່ ທີ່ມີຄວາມສ່ຽງສູງ ແລະ ຕິດຕາມກວດກາດ້ານອຸປະຕິເຫດແຮງງານປະຈໍາວັນ. ໃນກໍລະນີເກີດອຸປະຕິເຫດ, ມີຜູ້ບາດເຈັບ ຫລື ເສຍຊີວິດຢູ່ພາຍໃນໂຮງງານ ຕ້ອງລາຍງານຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຊາບທັນທີ.

(2) ຕ້ອງຕິດຕັ້ງລະບົບປ້ອງກັນຄວາມປອດໄພ ໃນການນໍາໃຊ້ໄຟຟ້າ ເຊັ່ນ: ລະບົບໄຟຟ້າເຄື່ອງຈັກ, ໄຟຟ້າແສງສະຫວ່າງ ແລະ ອື່ນໆ.

(3) ຕ້ອງຕິດຕັ້ງເຄື່ອງປ້ອງກັນອັນຕະລາຍຈາກເຄື່ອງຈັກ ເຊັ່ນ: ປ້າຍເຕືອນ, ປ້າຍຫ້າມໃສ່ສະຖານທີ່ ທີ່ເປັນອັນຕະລາຍ ແລະ ພ້ອມທັງມີແຜນການບໍາລຸງຮັກສາເຄື່ອງຈັກ ອຸປະກອນ ເປັນປະຈໍາ.

(4) ຕ້ອງຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ພາຍໃນໂຮງງານໃຫ້ພຽງພໍ ເຊັ່ນ: ລະບົບສັນຍານເຕືອນໄພ, ບັ້ງດັບເພີງ ຫລື ລະບົບນໍ້າມອດໄຟ ໃຫ້ພຽງພໍ.

(5) ຕ້ອງປະກອບອຸປະກອນປ້ອງກັນຝຸ່ນ, ຄວັນ, ແສງ, ສຽງ, ຄວາມຮ້ອນ, ເຄມີ... ຊຶ່ງໃນນັ້ນ ຕ້ອງມີອຸປະກອນປິດປາກ, ປິດດັງ, ປິດຫູ, ເຄື່ອງກັນແສງ, ກັນຄວາມຮ້ອນ, ເກີບ, ໝວກ, ສົບມື... ຂຶ້ນກັບແຕ່ລະຂອດງານ.

(6) ຕ້ອງຕິດຕັ້ງລະບົບແສງສະຫວ່າງ, ການລະບາຍອາກາດໃຫ້ພຽງພໍ ແລະ ເໝາະສົມກັບຂອດງານການຜະລິດຢູ່ພາຍໃນໂຮງງານ.

7) ຕ້ອງຈັດໃຫ້ມີນໍ້າດື່ມສະອາດ, ຕູ້ຢາສຸກເສີນ, ຫ້ອງນໍ້າ, ຫ້ອງປ່ຽນເຄື່ອງນຸ່ງ, ບ່ອນພັກຜ່ອນ, ບ່ອນຮັບປະທານອາຫານຂອງຄົນງານ ໃຫ້ພຽງພໍຕາມຄວາມເໝາະສົມ.

6). ສິ່ງແວດລ້ອມໂຮງງານ

(1) ໂຮງງານຜະລິດຢາສູບ ຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕ້ອງມີໃບຢັ້ງຢືນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຫລື ແຜນຄຸ້ມຄອງສິ່ງແວດລ້ອມໂຮງງານ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມຂໍ້ຕົກລົງຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 1222/ອຄ, ລົງວັນທີ 7/12/05 ຈຶ່ງກໍ່ສ້າງໂຮງງານໄດ້.

(2) ຕ້ອງມີລະບົບບໍາບັດ ຫລື ລະບົບກໍາຈັດ ສິ່ງເສດເຫລືອຈາກໂຮງງານ ເຊັ່ນ: ຝຸ່ນ, ຄວັນ, ນໍ້າເປື້ອນ, ນໍ້າເສັຍຄຸນ ແລະ ອື່ນໆ.

(3) ຕ້ອງມີໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ປະຈໍາຢູ່ໂຮງງານ.

7). ຜະລິດຕະພັນຢາສູບ

(1). ບໍລິສັດ ຫລື ໂຮງງານຜະລິດຢາສູບ ຕ້ອງມີເຄື່ອງໝາຍການຄ້າ(ຍີ່ຫໍ້) ສະເພາະຂອງໂຮງງານ ຫລື ນໍາໃຊ້ເຄື່ອງໝາຍການຄ້າຂອງຜູ້ອື່ນ ແຕ່ຕ້ອງໄດ້ຂຶ້ນທະບຽນ ແລະ ຢັ້ງຢືນຖືກຕ້ອງຈາກອົງການທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ.

(2). ບໍລິສັດ ຫລື ໂຮງງານຜະລິດຢາສູບ ຕ້ອງພິມຄຳເຕືອນກ່ຽວກັບຜົນຮ້າຍຂອງຢາສູບ ຕໍ່ສຸຂະພາບຂອງຄົນເຮົາ ໃສ່ວັດສະດຸຫຸ້ມຫໍ່ຜະລິດຕະພັນຢາສູບ ຕາມທີ່ໄດ້ກຳນົດຢູ່ໃນດຳລັດ ສະບັບເລກທີ 370/ສນຍ, ລົງວັນທີ່ 23/8/2010.

(3). ຫ້າມບໍ່ໃຫ້ບໍລິສັດ ຫລື ໂຮງງານຜະລິດຢາສູບ ໂຄສະນາສົ່ງເສີມການບໍລິໂພກຜະລິດຕະພັນຢາສູບ ໃນທຸກຮູບແບບ ຕາມທີ່ໄດ້ກຳນົດຢູ່ໃນດຳລັດ ສະບັບເລກທີ 369/ສນຍ, ລົງວັນທີ່ 23/8/2010.

ຄ. ການສ້າງແຜນຄວາມຕ້ອງການວັດຖຸດິບ ແລະ ແຜນການຜະລິດຂອງໂຮງງານ

ຜູ້ດຳເນີນກິດຈະການໂຮງງານຜະລິດຢາສູບ ຕ້ອງສ້າງແຜນຄວາມຕ້ອງການນຳໃຊ້ວັດຖຸດິບ, ແຜນການຜະລິດ ແລະ ແຜນການຈຳໜ່າຍປະຈຳປີຕໍ່ໄປຂອງໂຮງງານ ໂດຍຜ່ານການກວດກາ ແລະ ຢັ້ງຢືນ ຈາກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ກ່ອນວັນທີ່ 30 ເດືອນພະຈິກ ຂອງປີກຳລັງປະຕິບັດຢູ່ປະຈຸບັນ ແລະ ພ້ອມທັງສະຫລຸບລາຍງານຜົນການຈັດຕັ້ງປະຕິບັດແຜນການ ຂອງປີປະຈຸບັນດ້ວຍ.

III. ພັນທະຂອງໂຮງງານຕໍ່ລັດ ໃນການນຳເຂົ້າວັດຖຸດິບ

1). ການນຳເຂົ້າວັດຖຸດິບ ເພື່ອການຜະລິດ ເຊັ່ນ: ໃບຢາແຫ້ງ, ເສັ້ນຢາອົບແຫ້ງ, ເຈ້ຍຫຸ້ມຫໍ່ ແລະ ອື່ນໆ ຕ້ອງເສັຍອາກອນມູນຄ່າເພີ່ມ ຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 04/ສພຊ, ລົງວັນທີ່ 26/12/06 ບົນພື້ນຖານການຢັ້ງຢືນຈາກຂະແໜງການອຸດສາຫະກຳ ແລະ ການຄ້າ.

2). ການຊື້-ຂາຍ ວັດຖຸດິບ (ໃບຢາສູບ, ເສັ້ນຢາສູບ) ລະຫວ່າງ ໂຮງງານກັບຊາວສວນ ຫລື ໂຮງງານກັບຄູ່ຄ້າອື່ນໆ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ່ 19/5/05; ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 04/ສພຊ, ລົງວັນທີ່ 26/12/06; ດຳລັດວ່າດ້ວຍໃບເກັບເງິນ ສະບັບເລກທີ 12/ນຍ, ລົງວັນທີ່ 23/1/06; ລະບຽບກ່ຽວກັບທະບຽນອາກອນ ສະບັບເລກທີ 3225/ກງ, ລົງວັນທີ່ 17/12/2000 ແລະ ບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0523/ກງ, ລົງວັນທີ່ 13/3/09 ຢ່າງເຂັ້ມງວດ.

3). ບໍລິສັດ ຫລື ໂຮງງານຜະລິດຢາສູບ ສາມາດນຳເຂົ້າໃບຢາສູບ, ເສັ້ນຢາສູບ ຈາກຕ່າງປະເທດໃນເງື່ອນໄຂບໍ່ເກີນ 20% ເພື່ອເສັຍພາສີ 1% ແລະ ຕ້ອງນຳໃຊ້ໃບຢາສູບທີ່ຜະລິດຢູ່ພາຍໃນ 80% ຂຶ້ນໄປ ຕາມຂໍ້ກຳນົດຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 224/ອຫ, ລົງວັນທີ່ 9/6/03 ສຳລັບສ່ວນເກີນຕ້ອງປະຕິບັດພາສີ ອາກອນ ຕາມລະບຽບກົດໝາຍ.

IV. ການນຳເຂົ້າວັດຖຸດິບ ເພື່ອມາປຸງແຕ່ງແລ້ວສົ່ງອອກຕໍ່

ການນຳເຂົ້າວັດຖຸດິບ ເພື່ອມາປຸງແຕ່ງເປັນຜະລິດຕະພັນເຄິ່ງສຳເລັດຮູບ ເຊັ່ນ: ໃບຢາອົບແຫ້ງ ແລະ ອັດເປັນແທ່ງ ຫລື ສຳເລັດຮູບ ແລ້ວສົ່ງອອກຕໍ່ ໃຫ້ປະຕິບັດດັ່ງນີ້:

1). ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ, ບົນພື້ນຖານການເຮັດສັນຍາຂໍ້ຜູກພັນກັບຂະແໜງການເງິນໃນການນຳເຂົ້າເພື່ອສົ່ງອອກຕໍ່.

2). ຕ້ອງສົ່ງອອກຕາມເວລາທີ່ກຳນົດໄວ້ໃນສັນຍາ ແລະ ການອະນຸຍາດ ພາຍໃນ 6 ເດືອນ ແລະ ຈະບໍ່ອະນຸຍາດໃຫ້ຈຳໜ່າຍຢູ່ພາຍໃນຢ່າງເດັດຂາດ.

3). ພາຍຫລັງທີ່ສຳເລັດການນຳເຂົ້າວັດຖຸດິບ ທີ່ນຳເຂົ້າມາເພື່ອປຸງແຕ່ງ ແລ້ວສົ່ງອອກຕໍ່ໄປປະເທດທີ 3, ບໍລິສັດ ຫລື ໂຮງງານ ຕ້ອງສະຫລຸບລາຍງານ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍມີການຢັ້ງຢືນຈາກເຈົ້າໜ້າທີ່ປະຈຳດ່ານບ່ອນນຳເຂົ້າ ແລະ ສົ່ງອອກ. ໃນກໍລະນີ ບໍ່ສາມາດປະຕິບັດການນຳເຂົ້າ ຫລື ສົ່ງອອກ

ໄດ້ໝົດຕາມກຳນົດເວລາ, ບໍລິສັດ ຫລື ໂຮງງານ ຕ້ອງລາຍງານ ໂດຍມີການຢັ້ງຢືນຈາກເຈົ້າໜ້າທີ່ກ່ຽວຂ້ອງ-ພ້ອມເຫດຜົນ ເພື່ອຂໍອະນຸມັດຕໍ່ສັນຍາການນຳເຂົ້າ ແລະ ສົ່ງອອກ ນຳກະຊວງອຸດສາຫະກຳ ແລະ ການຄ້າ.

4). ບໍລິສັດ ຫລື ໂຮງງານ ຕ້ອງຜະລິດເພື່ອການສົ່ງອອກທັງໝົດ, ບໍ່ໃຫ້ຈຳໜ່າຍຢູ່ພາຍໃນປະເທດ, ເມື່ອໃດທີ່ມີການລົງທຶນປູກໃບຢາສູບ ຢູ່ ສປປ ລາວ ກວມ 80% ຂອງວັດຖຸດິບທັງໝົດແລ້ວ ຈຶ່ງອະນຸຍາດໃຫ້ຈຳໜ່າຍຢູ່ພາຍໃນບໍ່ເກີນ 20% ຂອງການຜະລິດ.

## V. ເງື່ອນໄຂໃນການຈຳໜ່າຍ ຢູ່ໃນ ສປປ ລາວ

ຢາສູບທຸກຊອງທີ່ຜະລິດ ຢູ່ພາຍໃນ ຫລື ນຳເຂົ້າມາຈາກຕ່າງປະເທດ ສາມາດຈຳໜ່າຍຢູ່ພາຍໃນໄດ້ ກໍ່ຕໍ່ເມື່ອໄດ້ພິມຄຳເຕືອນທີ່ເປັນອັນຕະລາຍຕໍ່ສຸຂະພາບ, ຕິດສະແຕມອາກອນ ແລະ ສະແຕມພາສີ ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 370/ສນຍ, ລົງວັນທີ 23/8/2010; ແຈ້ງການຂອງກະຊວງການເງິນ ສະບັບເລກທີ 1060/ກງ, ລົງວັນທີ 13/6/03 ແລະ ສະບັບເລກທີ 1641/ກງ, ລົງວັນທີ 26/7/06.

## VI. ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ

1). ມອບໃຫ້ກົມອຸດສາຫະກຳ, ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະ ສົ່ງອອກ ແລະ ພາກສ່ວນທີ່ກ່ຽວຂ້ອງຜັນຂະຫຍາຍ, ຕິດຕາມ ແລະ ຈັດຕັ້ງປະຕິບັດຄຳສັ່ງແນະນຳ ສະບັບນີ້ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

2). ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ເຜີຍແຜ່, ແນະນຳ ໃຫ້ຜູ້ດຳເນີນກິດຈະການຜະລິດຢາສູບ ຮັບຊາບ ແລະ ຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ດ້ວຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

3). ໃນກໍລະນີ ຜູ້ດຳເນີນກິດຈະການບໍລິສັດ ຫລື ໂຮງງານ ຫາກລະເມີດ ບໍ່ປະຕິບັດຕາມຄຳສັ່ງແນະນຳສະບັບນີ້ ໃຫ້ປະຕິບັດມາດຕະການຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ສະບັບເລກທີ 1301/ອຄ, ລົງວັນທີ 30/7/07 ແລະ ປະຕິບັດມາດຕະການຕາມລະບຽບກົດໝາຍກ່ຽວຂ້ອງ ຕາມແຕ່ລະກໍລະນີ ຢ່າງເຂັ້ມງວດ.

ດັ່ງນັ້ນ , ຈຶ່ງແນະນຳມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ນູລີສະຫວາດ ສະແຫວງສຶກສາ

- ບ່ອນສົ່ງ:
- ຄະນະເລຂາທິການລັດຖະບານ (ເພື່ອໃຊ້ຕາງລາຍງານ).
- ທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນ (ເພື່ອໃຫ້ທິດຊີ້ນຳການຈັດຕັ້ງປະຕິບັດ).
- ກົມສົ່ງເສີມການລົງທຶນ, ກ/ຊ ແຜນການ ແລະ ການລົງທຶນ (ເພື່ອຊາບ).
- ກົມພາສີ, ກົມສ່ວຍສາອາກອນ, ກ/ຊ ການເງິນ (ເພື່ອຊາບ).
- ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ (ເພື່ອຊາບ).
- ກົມອະນາໄມ-ກັນພະຍາດ, ກະຊວງສາທາລະນະສຸກ (ເພື່ອຊາບ).
- ກົມອຸດສາຫະກຳ, ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະ ສົ່ງອອກ, ກ/ຊ ອຸດສາຫະກຳ ແລະ ການຄ້າ (ເພື່ອປະຕິບັດ ແລະ ຕິດຕາມ).
- ສຳເນົາກະຊວງ.